| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບທະບຽນວິສາຫະກິດຂອງ ບໍລິສັດມະຫາຊົນ | |
| ປະເພດຂອງໃບອະນຸຍາດ | ໃບຢັ້ງຢືນ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoIC-ERMD-7 | 05.01.2018 | ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດສະເພາະ ທີ່ຕິດພັນກັບໃບອະນຸຍາດ | ທຸກພາກສ່ວນ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ເພື່ອຢັ້ງຢືນ ແລະ ຢືນຢັນວ່າບໍລິສັດໄດ້ຖືກສ້າງຂຶ້ນຕາມກົດຫມາຍ ແລະ ຢັ້ງຢືນຂອບເຂດການດໍາເນີນທຸລະກິດ ຫຼື ຈຸດປະສົງທີ່ບໍລິສັດສາມາດດໍາເນີນການໄດ້, ພາຍຫຼັງທີ່ອອກໃບທະບຽນນີ້ |

| ຂໍ້ມູນພື້ນຖານ | |
|---|---|
| | ບໍລິສັດດັ່ງກ່າວຕ້ອງເລີ່ມໄຫວທຸລະກິດຂອງຕົນພາຍໃນ 90 ວັນ, ຖ້າບໍ່ເຄື່ອນໄຫວແມ່ນຕ້ອງແຈ້ງເຈົ້າໜ້າທີ່ເພື່ອຊາບ ແລະ ຕ້ອງໄດ້ຂໍໃບອະນຸຍາດຈາກຂະແໜງການກ່ຽວຂ້ອງຕາມກິດຈະການທີ່ຕົນຈະດໍາເນີນ. |
| **ຜູ້ທີ່ຕ້ອງຂໍໃບອະນຸຍາດ** | ບຸກຄົນ ຫຼື ນິຕິບຸກຄົນ ທີ່ສົນໃຈສ້າງຕັ້ງບໍລິສັດມະຫາຊົນ ເປັນຮູບການວິສາຫະກິດໜຶ່ງ ຊຶ່ງສ້າງຕັ້ງຂຶ້ນດ້ວຍການແບ່ງທຶນເປັນຮຸ້ນ ແລະ ແຕ່ລະຮຸ້ນຕ້ອງມີມູນຄ່າເທົ່າກັນ, ຜູ້ຖືຮຸ້ນຮັບຜິດຊອບຕໍ່ໜີ້ສິນຂອງບໍລິສັດບໍ່ເກີນມູນຄ່າຮຸ້ນທີ່ຕົນບໍ່ໄດ້ຖອກເທົ່ານັ້ນ ແລະ ວິສາຫະກິດດັ່ງກ່າວ ມີຜູ້ຖືຮຸ້ນທີ່ເປັນຜູ້ກໍ່ຕັ້ງຢ່າງໜ້ອຍເກົ້າຄົນຂຶ້ນໄປ, ສາມາດໂອນຮຸ້ນໄດ້ຢ່າງເສລີ ແລະ ສະເໜີຂາຍຮຸ້ນຢ່າງເປີດເຜີຍຕໍ່ມວນຊົນທົ່ວໄປໄດ້. |
| **ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່?** | ແມ່ນແລ້ວ |
| **ທີ່ຢູ່ຂອງຂໍ້ມູນອອນລາຍ** | www.erm.gov.la |
| **ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່?** | ແມ່ນແລ້ວ |
| **ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ** | |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ໄລຍະເວລາໃນການ ພິຈາລະນາຄໍາຮ້ອງ ໃນ ການອອກໃບອະນຸຍາດ** | 13 | 1. ສໍາລັບບັນດາທຸລະກິດຄວບຄຸມ (ໝາຍເຖິງບັນຊີປະເພດທຸລະກິດທີ່ມີຄວາມອ່ອນໄຫວສູງ ເປັນຕົ້ນຕໍ່ຄວາມໝັ້ນຄົງຂອງຊາດຕົ້ນ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ  ສະພາວະແວດລ້ອມ ຊຶ່ງຈໍາເປັນຕ້ອງໄດ້ຮັບການພິຈາລະນາກວດສອບຜ່ານຂະແໜງການກ່ຽວຂ້ອງກ່ອນການຂຶ້ນທະບຽນວິສາຫະກິດ), ໄລຍະເວລາການພິຈາລະນາທັງຫມົດແມ່ນ 13 ວັນລັດຖະການ. 2. ສໍາລັບທຸລະກິດທີ່ບໍ່ແມ່ນທຸລະກິດຄວບຄຸມ, ໄລຍະເວລາການພິຈາລະນາແມ່ນ 10 ວັນລັດຖະການ. |
| **ຄຸນະສົມບັດຂອງຜູ້ຂໍໃບ ອະນຸຍາດ** | ບໍ່ມີຄຸນສົມບັດພິເສດທີ່ຈໍາເປັນສໍາລັບການຂໍໃບທະບຽນນີ້, ຍົກເວັ້ນໃນກໍລະນີທີ່ບໍລິສັດຈໍາກັດນັ້ນຈະດໍາເນີນທຸລະກິດຕາມທີ່ຂະແໜງການກ່ຽວຂ້ອງກໍານົດ, ໂດຍສະເພາະທຸລະກິດຄວບຄຸມ, ສໍາລັບທຸລະກິດຄວບຄຸມ ຂະແໜງການກ່ຽວຂ້ອງອາດມີການກໍານົດເພີ້ມເຕີມສໍາລັບເງື່ອນໄຂ ແລະ ຮ້ອງຂໍຕາມການຮຽກຮ້ອງ ແລະ ເຈົ້າໜ້າທີ່ຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຈະຕ້ອງພິຈາລະນາທັງຫມົດຕາມເງື່ອນໄຂທີ່ກໍານົດຂອງຂະແໜງການກ່ຽວຂ້ອງ. ນອກເໜືອຈາກ | |

| ຄຸນະສົມບັດ ແລະ ເອກະສານປະກອບ | |
|---|---|
| | ຕ້ອງເບິ່ງຕາມເງື່ອນໄຂ ແລະ ການກໍານົດຂອງຂະແໜງການກ່ຽວຂ້ອງແລ້ວ ຍັງຕ້ອງເບິ່ງຕາມປະເພດກິດຈະການທີ່ຜູ້ລົງທຶນສະເໜີ. |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ຂະແໜງການກ່ຽວຂ້ອງຈະປະຕິເສດຄໍາຮ້ອງໂດຍອີງການພິຈາລະນາທາງດ້ານວິຊາການ. |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ບໍ່ມີ | 0 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 90000.00 | 5000000.00 | 0.00 | 5090000.00 |
| **ຄໍາເຫັນ** | 1. ອີງຕາມລັດຖະບັນຍັດ ເລກທີ 003/ປປທ 2. ຄ່າທໍານຽມອອກໃບທະບຽນວິສາຫະກິດແມ່ນອີງຕາມທຶນຈົດທະບຽນຂອງວິສາຫະກິດ ດັ່ງນີ້: - ທຶນຈົດທະບຽນແຕ່ 1,000,000 ກີບ ລົງມາ ບໍ່ມີຄ່າທໍານຽມ. - ທຶນຈົດທະບຽນຫຼາຍກວ່າ 1,000,000 ກີບ ຫາ 10,000,000 ກີບ ແມ່ນ 20,000 ກີບ. - ທຶນຈົດທະບຽນ ຫຼາຍກວ່າ 10,000,000 ກີບ ຫາ 20,000,000 ກີບ ແມ່ນ 50,000 ກີບ. - ທຶນຈົດທະບຽນ ຫຼາຍກວ່າ 20,000,000 ກີບ ຫາ 50,000,000 ກີບ ແມ່ນ 100,000 ກີບ. - ທຶນຈົດທະບຽນ ຫຼາຍກວ່າ 50,000,000 ກີບ ຫາ 100,000,000 ກີບ ແມ່ນ 300,000 ກີບ. - ທຶນຈົດທະບຽນ ຫຼາຍກວ່າ 100,000,000 ກີບ ຫາ 400,000,000 ກີບ ແມ່ນ 500,000 ກີບ. - ທຶນຈົດທະບຽນ ຫຼາຍກວ່າ 400,000,000 ກີບ ຫາ 1,000,000,000 ກີບ ແມ່ນ 1,000,000 ກີບ. - ທຶນຈົດທະບຽນ ຫຼາຍກວ່າ 1,000,000,000 ກີບ ຫາ 10,000,000,000 ກີບ ແມ່ນ 2,000,000 ກີບ. - ທຶນຈົດທະບຽນ ຫຼາຍກວ່າ 10,000,000,000 ກີບ ຫາ 20,000,000,000 ກີບ ແມ່ນ 3,000,000 | | | |

| ຄ່າທຳນຽມ | |
|---|---|
| | ກີບ. - ທຶນຈົດທະບຽນ ຫຼາຍກວ່າ 20,000,000,000 ກີບ ຂຶ້ນໄປ ແມ່ນ 5,000,000 ກີບ.<br>3. ຄ່າຟອມຄຳຮ້ອງລວມມີດັ່ງນີ້: (1) ສັນຍາສ້າງຕັ້ງ 10,000 ກີບ ແລະ ຄ່າຟອມຄຳຮ້ອງຂອງບໍລິສັດມະຫາຊົນແມ່ນ 70,000 ກີບ. |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທຳນຽມ ແບບຟອມ ຄຳຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທຳນຽມ** | **ຄ່າ ແບບຟອມ ຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳເຫັນ** | | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄຳເຫັນ** |
| ກົດໝາຍວ່າດ້ວຍ ວິສາຫະກິດ (ສະບັບປັບປຸງ) | 46/ສພຊ | 26.12.2013 | ພາກທີ II ວິສາຫະກິດ ໝວດທີ 2 ການຂຶ້ນທະບຽນວິສາຫະກິດ (ມາດຕາ 14 ຫາ ມາດຕາ 18) ພາກທີ V ບໍລິສັດ ໝວດທີ 3 ບໍລິສັດມະຫາຊົນ (ມາດຕາ 185) |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກກໍລະນີຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົວເອງ |
| ສຳເນົາບັດປະຈຳຕົວ / ສຳມະໂນຄົວ / ພາດສະປອດ ຂອງຜູ້ລົງທຶນ |
| ສຳເນົາບັດປະຈຳຕົວ/ສຳມະໂນຄົວຂອງອຳນວຍການ |
| ຮູບຖ່າຍຂອງອຳນວຍການ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) |
|---|

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 1 | 0 |